ສໍານັກງານໃຫຍ່

ເລກທີ: 089 /ທຄຕລ 2020

ນະຄອນຫຼວງວຽງຈັນ, ວັນທີ: 04 NOV 2020

# ແຈ້ງເຊີນປະມູນ

**ເຖິງ :** ບັນດາບໍລິສັດ ຫ້າງຮ້ານຕົວແທນຈໍາໜ່າຍຈັກປັ່ນໄຟຟ້າ ໃນ ສປປ ລາວ

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາຈັກປັ່ນໄຟຟ້າ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາທ່ານ ເຂົ້າຮ່ວມຍື່ນຊອງປະມູນລາຄາຈັກປັ່ນໄຟຟ້າ ຂະໜາດ 30 KVA ຈໍານວນ 1 ໜ່ວຍ ເພື່ອປະກອບໃຫ້ ໜ່ວຍບໍລິການ ຂົວມິດຕະພາບ 1. ຕັ້ງຢູ່ດ່ານຂົວມິດຕະພາບລາວ-ໄທ ເມືອງ ຫາດຊາຍຟອງ, ນະຄອນຫຼວງວຽງຈັນ ໂດຍມີລາຍລະອຽດ ດັ່ງນີ້:

1. **ລາຍລະອຽດການປະກອບເອກະສານ:**

➢ **ເອກະສານ ຊອງທີ 1 (ບໍ່ປິດຊອງ):**

- ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດໍາເນີນທຸລະກິດໃຫ້ບໍລິການດ້ານໄຟຟ້າ, ແລະ ມີປະສົບການຢ່າງໜ້ອຍ 05 ປີຂຶ້ນໄປ (ສໍາເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດໍາເນີນທຸລະກິດ, ໃບຢັ້ງຢືນການເສຍອາກອນ ປະຈໍາປີ 2019) ພ້ອມໃບຢັ້ງຢືນຜົນງານ ແລະ ປະສົບການທີ່ຜ່ານມາ.
- ກໍານົດຍື່ນຊອງແມ່ນນັບຈາກມື້ນີ້ ຫາ ວັນທີ 12/11/2020 ເວລາ 11:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສໍານັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ4 ອາຄານ C.

➢ **ເອກະສານ ຊອງທີ 2 (ປິດຊອງ):**

- ໃບສະເໜີລາຄາ 1 ຊຸດ ຕາມຍີ່ຫໍ້ຈັກປັ່ນໄຟຟ້າທີ່ຜູ້ສະໜອງມີສິນຄ້າ ລວມຄ່າຕິດຕັ້ງ ແລະ ທົດລອງນໍາໃຊ້ (ສາມາດຍື່ນໄດ້ຫຼາຍກວ່າ 1 ຍີ່ຫໍ້) ພ້ອມກໍານົດໄລຍະຮັບປະກັນ, ການສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມ ອາກອນມູນຄ່າເພີ່ມ 10%.
- ຜູ້ສະໜອງຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 2% ຂອງມູນຄ່າທັງໝົດ (ຖ້າມີຫຼາຍຍີ່ຫໍ້ຫຼາຍລາຄາ ໃຫ້ເລືອກວາງ 2% ຂອງລາຄາທີ່ສູງທີ່ສຸດ) ໂດຍໜັງສືຄໍ້າປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸຂອງໜັງສືຄໍ້າປະກັນແມ່ນ ວັນທີ 23/12/2020) ຫຼື ແຊັກທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນ.
- ກໍານົດຍື່ນຊອງແມ່ນນັບຈາກມື້ນີ້ ຫາ ວັນທີ 12/11/2020 ເວລາ 11:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສໍານັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ4 ອາຄານ C.

**ໝາຍເຫດ: ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:
  * ງວດທີ 1: ຊຳລະ 90% ຂອງມູນຄ່າພາຍໃນເວລາ 30 ວັນ ຫຼັງຈາກທີ່ໄດ້ຮັບເຄື່ອງ ຕິດຕັ້ງສຳເລັດ 100% ແລະ ໄດ້ຮັບການກວດກວຽກຈາກຄະນະກຳມະການກວດກາ ທຄຕລ.
  * ງວດທີ 2: ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນນະພາບສິນຄ້າ (ການຄ້ຳປະກັນສິນຄ້າຢ່າງໜ້ອຍ 1 ປີ).

ດັ່ງນັ້ນ, ຈິ່ງແຈ້ງເຊີນມາຍັງທ່ານ ທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້ດ້ວຍ.

**ອຳນວຍການໃຫຍ່**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ບັນທະລາດ ແກ້ວປະເສີດ